ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LALCO
LAO ASEAN LEASING PUBLIC COMPANY

ເລກທີ. 9000../ລອຊ/2021

ນະຄອນຫຼວງວຽງຈັນ, ວັນທີ: 30 ເມສາ 2021

ຮຽນ: ຫົວໜ້າສຳນັກງານຄະນະຄຸ້ມຄອງຫຼັກຊັບລາວ
ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບ
ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ວັນທີ 30 ເມສາ ປີ 2021

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ ລົງວັນທີ 27 ກັນຍາ 2018

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປຸ ມສະພາບໍລິຫານ ຊຶ່ງມີລາຍລະອຽດດັ່ງນີ້:

1. ກອງປະຊຸມເຫັນດີໃຫ້ເລື່ອນ ກອງປະຊຸມຜູ້ຖືຮຸ້ນໄປກ່ອນ ແລະ ເລື່ອນການເປີດເຜີຍຂໍ້ມູນເອກະສານລາຍງານການເງິນປະຈຳປີ 2020 ເນື່ອງຈາກ:
   - ບໍລິສັດຫັນປ່ຽນມາໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຊຶ່ງຕ້ອງໃຊ້ເວລາໃນການທົບທວນປົດລາຍງານຄືນ.
   - ການແຜ່ລະບາດຂອງ ພະຍາດ Covid 19 ຊຶ່ງໄດ້ແຜ່ເຊື້ອຢ່າງກວ້າງຂວາງ ແລະ ປະຈຸບັນທາງບໍລິສັດ ມີຜູ້ຕິດເຊື້ອ Covid-19. ບໍລິສັດຕ້ອງປິດຫ້ອງການຊົ່ວຄາວ ຕາມທິດຊີ້ນຳຂອງຄະນະສະເພາະກິດ ຕ້ານ Covid -19 ຊຶ່ງມີຜົນສະທ້ອນຕໍ່ຂັ້ນຕອນການກະກຽມຈັດກອງປະຊຸມຜູ້ຖືຮຸ້ນ. .
2. ກອງປະຊຸມຜູ້ຖືຮຸ້ນຈະຈັດຂຶ້ນຫຼັງຈາກເອກະສານລາຍງານຖານະການເງິນສຳເລັດແລ້ວ ແລະ ຈະແຈ້ງໃຫ້ທ່ານຊາບພາຍຫຼັງ.

ດັ່ງນັ້ນ ບໍລິສັດຈຶ່ງຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບນັບຖື

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ປະທານສະພາບໍລິຫານ

ທ່ານ ນາງ ຢຸກິ ສະກັອດ